CALIFORNIA

# CalVCB

VICTIM COMPENSATION BOARD



## ທ່ານແມ່ນຜູ້ຖືກເຄາະຮ້າຍຫລືບໍ່? ພວກເຮົາສາມາດຊ່ວຍໄດ້

ຖ້າທ່ານຫລືສະມາຊິກໃນຄອບຄົວຂອງທ່ານຕົກເປັນເຫຍື່ອອາຊະຍາກຳ,
ຄະນະກຳມະການຊົດເຊີຍຜູ້ຖືກເຄາະຮ້າຍລັດຄາລີຟໍເນຍສາມາດຊ່ວຍເຫຼືອທ່ານໄດ້.

---

## CalVCB ຈະສາມາດຊ່ວຍຊ່ວຍເຫຼືອທ່ານໄດ້ແນວໃດ?

ຄະນະກຳມະການຊົດເຊີຍຜູ້ຖືກເຄາະຮ້າຍລັດຄາລີຟໍເນຍ (CalVCB) ໃຫ້ການຊ່ວຍເຫຼືອດ້ານການເງິນແກ່ຜູ້ຕົກເປັນເຫຍື່ອອາຊະຍາກຳ. ການຊ່ວຍເຫຼືອນີ້ແມ່ນສຳລັບຜູ້ຖືກເຄາະຮ້າຍ, ສະມາຊິກໃນຄອບຄົວ, ແລະຜູ້ທີ່ພວກເຂົາເຈົ້າຮັກ ເຊິ່ງໄດ້ຮັບບາດເຈັບຫລືຖືກຂົ່ມຂູ່ວ່າຈະຖືກທຳຮ້າຍໃຫ້ໄດ້ຮັບບາດເຈັບຍ້ອນມາຈາກເຮັດຜິດທາງອາຍາ. ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອໃນການຍື່ນຂໍໃຊ້ສິດທິຮຽກຮ້ອງ, ກະລຸນາຕິດຕໍ່ສູນຊ່ວຍເຫຼືອພະຍານຜູ້ຖືກເຄາະຮ້າຍ (Victim Witness Assistance Center) ໃນທ້ອງຖິ່ນຂອງທ່ານໄດ້ທີ່: **victims.ca.gov/victims/localhelp.aspx**

### CalVCB ຈະເສຍຄ່າໃຊ້ຈ່າຍໃນການຊ່ວຍເຫຼືອທາງດ້ານ:

- ການໃຫ້ຄຳປຶກສາ
- ການປິ່ນປົວທາງການແພດ ແລະການປິ່ນປົວແຂ້ວແລະອຸປະກອນ
- ການຂາດລາຍໄດ້
- ຄ່າໃຊ້ຈ່າຍໃນງານສົບແລະການຝັງສົບ
- ການຮັກສາຄວາມປອດໄພທີ່ຢູ່ອາໄສ
- ການດັດແປງເຮືອນຫຼືພາຫະນະສຳລັບຜູ້ຖືກເຄາະຮ້າຍຜູ້ທີ່ກາຍເປັນຄົນພິການ
- ການທຳຄວາມສະອາດສະຖານທີ່ເກີດເຫດອາດຊະຍາກຳ
- ການຍົກຍ້າຍຖິ່ນຖານ
- ໝານຳທາງ

### ຄວາມຜິດລວມເຖິງ, ແຕ່ວ່າບໍ່ຈຳກັດສະເພາະທາງລຸ່ມນີ້ເທົ່ານັ້ນ:

- ການທຳຮ້າຍຮ່າງກາຍ
- ການລ່ວງລະເມີດເດັກນ້ອຍ
- ຄວາມຮຸນແຮງໃນຄອບຄົວ
- ການຂັບລົດໃນຂະນະທີ່ມຶນເມົາ
- ການທຳຮ້າຍຜູ້ສູງອາຍຸ
- ອາຊະຍາກຳຍ້ອນມາຈາກຄວາມກຽດຊັງ
- ຕຳແລ້ວໜີ
- ການຄາດຕະກຳ
- ການຄ້າມະນຸດ
- ການກໍ່ກວນທາງອອນລາຍ
- ການລັກຊັບ
- ການທຳຮ້າຍທາງເພດ
- ການເຝົ້າຕິດຕາມ
- ການຂັບລົດຕຳຄົນຕາຍດ້ວຍຄວາມປະມາດ

## ຂ້າພະເຈົ້າຈະສະໝັກເພື່ອຂໍຄ່າຊົດເຊີຍໄດ້ແນວໃດ?

ສະໝັກກັບ CalVCB Online:

- ຂຽນໃບສະໝັກ
- ອັບໂຫລດແລະເບິ່ງເອກະສານ
- ອັບເດດຂໍ້ມູນຕິດຕໍ່ຂອງທ່ານ
- ສື່ສານກັບຫ້ອງການບໍລິການລູກຄ້າຂອງ CalVCB

ຜູ້ລອດຊີວິດຈາກອາຊະຍາກຳ ແລະຜູ້ທີ່ຊ່ວຍເຫຼືອພວກເຂົາເຈົ້າສາມາດສະໝັກເພື່ອຂໍຄ່າຊົດເຊີຍທາງອິນເຕີເນັດຜ່ານທາງ CalVCB Online ໄດ້ຈາກໂທລະສັບສະມາດໂຟນ, ແທັບເລັດ ຫລືຄອມພິວເຕີ້. CalVCB Online ແມ່ນມີເປັນພາສາອັງກິດແລະພາສາສະເປນ: **online.victims.ca.gov**

CalVCB Online

SCAN TO APPLY

ເພື່ອສະໝັກ

**victims.ca.gov** | ໂທ: **1-800-777-9229** | ອີເມລ: **info@victims.ca.gov** | **P.O. Box 3036 Sacramento, CA 95812**
* ຫູໜວກ ຫຼືບໍ່ຄ່ອຍໄດ້ຍິນ: ກະລຸນາໂທຫາ **California Relay Service** ທີ່ 711

rev.6.7.2020